San Diego Unified School District
**Fact Sheet**

# ນະໂຍບາຍມາຕະການບໍ່ໂຍະຍານ

ຄວາມປອດພັຍ ແລະ ການຮັກສາຄວາມປອດພັຍຢູ່ໃນໂຮງຮຽນນັ້ນສຳຄັນຢ່າງຍິ່ງ ເພື່ອເຮັດໃຫ້ສະພາບແວດລ້ອມການຮ່ຳຮຽນຂອງພວກນັກຮຽນທຸກໆຄົນ ກາຍເປັນຜູ້ອ່ານໄດ້ຂຽນເປັນ, ມີຄວາມນຶກຄິດສລຽວສລາດ, ແລະ ເປັນພົລເມືອງທີ່ດີຂອງສັງຄົມທີ່ມີຫລາຍຊົນຊາດຊົນເຜົ່າ. ສະພາບແວດລ້ອມອັນປອດພັຍນັ້ນມີຄວາມສຳຄັນທີ່ສຸດ ສຳຫລັບພວກພະນັກງານ ແລະ ນັກຮຽນ ແລະເພື່ອການຊຸກຍູ້ສນັບສນຸນໃຫ້ມີທັສນະອັນຈົບງາມຕໍ່ການສິດສອນ ແລະ ການສຶກສາຮ່ຳຮຽນ.

ສະພາສູນກາງສຶກສາໄດ້ໃຊ້ນະໂຍບາຍມາຕະການບໍ່ໂຍະຍານກ່ຽວກັບເຣື້ອງອາວຸດຕ່າງໆ, ການລະເມີດກົດຫມາຍ ແລະ ການຕ່ອຍຕີກັນຊ້ຳແລ້ວຊ້ຳອີກ. ຍະໂຍບາຍນີ້ນຳໃຊ້ກັບພວກນັກຮຽນໂຮງຮຽນພາກກາງ, ມັທຍົມພາກຕົ້ນ, ແລະ ມັທຍົມພາກປາຍ. ພວກນັກຮຽນມັທຍົມທີ່ລະເມີດນະໂຍບາຍນີ້ຈະຖືກສັ່ງຢຸດໂຮງຮຽນຊົ່ວຄາວ ແລະ ນຳພິຈາຣະນາໄລ່ອອກໂຮງຮຽນ. ພວກນັກຮຽນຈະຖືກຈັບກຸມຖ້າວ່າມີອາວຸດ ຫລື ໃຊ້ອາວຸດໃນຖານທີ່ລະເມີດຕໍ່ລະບຽບກົດຫມາຍອັນນີ້.

## ຂໍ້ສລຸບ

- ❖ ນະໂຍບາຍບໍ່ໂຍະຍານ ໃຊ້ສຳຫລັບພວກນັກຮຽນພາກກາງ/ມັທຍົມຕົ້ນ ແລະ ມັທຍົມ.
- ❖ ນະໂຍບາຍນີ້ຮຽກຮ້ອງໃຫ້ມີການສັ່ງຢຸດຊົ່ວຄາວ ແລະ/ຫລືພິຈາຣະນາໄລ່ອອກໂຮງຮຽນສຳຫລັບຜູ້ລະເມີດກົດລະບຽບກ່ຽວເລື່ອງອາວຸດ, ຄອບຄອງຢາເສບຕິດ ແລະ ທຳອັນລາຍຮ່າງກາຍ
- ❖ ອ່ານນະໂຍບາຍຄົບຖ້ວນໄດ້ທີ່ລະບຽບການປົກຄອງເລກທີ 6295, **www.sandi.net**

ອາວຸດຕ່າງໆ, ການກະທຳທີ່ຮ້າຍແຮງ, ແລະ ການຕ່ອຍຕີກັນ: ອາວຸດແມ່ນຮວມທັງປືນ, ມີດ, ປືນລູກຫວ່ານ, ປືນເດັກຫລິ້ນ/ປືນປອມ, ລູກຣະເບີດ, ລູກກະໂພກ/ບັ້ງໄຟຕ່າງໆ, ຫລື ວັດຖຸໃດໆທີ່ໃຊ້ເປັນສິ່ງຂູ່ໃຫ້ຢ້ານກົວ ຫລື ໃຊ້ໃນທາງທຳລາຍ. ການຖືມີດທຸກຊະນິດ (ຕົວຢ່າງ, ມີດໃສ່ຖົງ ຫລື ມີດທາເນີຍສຳຫລັບໃຊ້ກິນອາຫານ) ກໍບໍ່ອານຸຍາດໃຫ້ຖື. ສິ່ງຕ່າງໆທີ່ໃຊ້ເພື່ອເຮັດໃຫ້ຢ້ານກົວນັ້ນຈະຖືກວ່າເປັນອາວຸດຫມົດ, ເຖິງວ່າສິ່ງເຫລົ່ານັ້ນບໍ່ແມ່ນອາວຸດ ແຕ່ເປັນເຄື່ອງໃຊ້ທັມດາກໍຕາມ.

ນະໂຍບາຍນີ້ຍັງມີຄວາມຫມາຍສຳຫລັບພວກນັກຮຽນທີ່ຮ່ວມໃນການຕ່ອຍຕີກັນເຖິງຂັ້ນບາດເຈັບຢູ່ຊ້ຳແລ້ວຊ້ຳອີກກໍຈະຖືກພິຈາຣະນາໄລ່ອອກໂຮງຮຽນ.

ເຫລົ້າ, ຢາສູບ, ແລະ ຢາເສບຕິດອື່ນໆ: ສູນກາງສຶກສາພວກເຮົາຫ້າມບໍ່ໃຫ້ໃຊ້ເຫລົ້າ, ຢາສູບ, ແລະ ຢາເສບຕິດອື່ນໆພາຍໃນຂອບເຂດຂອງໂຮງຮຽນ, ໃນລາຍການຕ່າງໆທີ່ໂຮງຮຽນອຸປະຖັມ, ແລະ ໃນການໄປ/ມາຈາກໂຮງຮຽນ ຫລື ໃນການໄປມາຈາກລາຍການຕ່າງໆທີ່ໂຮງຮຽນຈັດຂຶ້ນ. ຖ້າພົບເຫັນນັກຮຽນຂາຍ ຫລື ເອົາເຄື່ອງເສບຕິດໃຫ້ໂທດທີ່ຫວງຫ້າມ ຫລື ຄອບຄອງເຄື່ອງເສບຕິດໃຫ້ໂທດທີ່ຫວງຫ້າມເກີນກຳນົດທີ່ຕົນໃຊ້ນັ້ນ, ຈະຖືກພິຈາຣະນາໄລ່ອອກຈາກໂຮງຮຽນ ໃນຄວາມຜິດຄັ້ງທີນຶ່ງ, ນອກຈາກຄວາມຜິດດ້ານຢາສູບ. ຖ້າເດັກຂອງທ່ານຫາກຖືກພົບເຫັນວ່າເປັນຜູ້ຄອບຄອງຢາສູບນັ້ນ, ເຂົາເຈົ້າຈະຖືກໄລ່ອອກໂຮງຮຽນໃນຄວາມຜິດຄັ້ງທີສີ່.

ຫ້ອງການປົກຄອງສູນກາງສຶກສາຍັງຈະໄດ້ແນະນຳສັ່ງສອນການຮັກສາກົດລະບຽບຂອງນັກຮຽນໂດຍວິທີເຂົ້າແຊກຊ່ອຍຕັ້ງແຕ່ຕົ້ນ. ການແນະນຳມີ:
- ສິດສອນ ຫລື ບຳຣຸງສອນບຸກຄົນ
- ປະຊຸມກັບພໍ່ແມ່
- ສເນີສົ່ງໄປຫາອົງການຊ່ວຍເຫລືອສັງຄົມ
- ຈັດຕລາງເວລາພົບກັບຄຣູແນະນຳຂອງໂຮງຮຽນໃຫ້ເປັນປະຈຳ

ຖ້ານັກຮຽນລະເມີດສັນຍາການເຂົ້າແຊກຊ່ອຍນັ້ນ, ນັກຮຽນຈະຖືກສັ່ງຢຸດໂຮງຮຽນຊົ່ວຄາວ. ຖ້າລະເມີດສັນຍາເປັນຄັ້ງທີສອງນັ້ນ, ນັກຮຽນອາດຈະຖືກຈັດໃສໂຄງການອື່ນ ຫລື ໂຮງຮຽນອື່ນໆ.

ເພື່ອລາຍລະອຽດຕິດຕໍ່ຫາ: Placement and Appeal: (619) 725-5660

**www.sandi.net**
*Revised 09/20/05*